ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະນຳ ທຫລ ເຂົ້າຮ່ວມວາງພວງມາລາ ແລະ ກະຕ່າດອກໄມ້ ເນື່ອງ ໃນໂອກາດ ວັນຊາດທີ 2 ທັນວາ 2021



ເພື່ອເປັນການສະແດງເຖິງຄວາມຮູ້ບຸນຄຸນ ແລະ ລະນຶກເຖິງຄຸນງາມຄວາມດີຂອງການນຳ ແລະ ນັກຮົບປະຕິວັດຮຸ່ນກ່ອນ ໃນຕອນເຊົ້າຂອງວັນທີ 1 ທັນວາ 2021 ນີ້ ຄະນະນຳຂອງທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ພ້ອມກັນຮ່ວມວາງພວງມາລາ ຢູ່ທີ່ອະນຸສາວະລີນັກຮົບນິລະນາມ ແລະ ກະຕ່າດອກໄມ້ຢູ່ຫໍພິພິຕະພັນ ທ່ານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວ.





ຄະນະນຳ ທຫລ ຍາມໃດກໍ່ຍົກສູງ ແລະ ເຫັນໄດ້ເຖິງຄວາມສຳຄັນຂອງວັນດັ່ງກ່າວ ຊຶ່ງເປັນການລະນຶກເຖິງ ຄຸນງາມຄວາມດີຂອງບັນດານັກຮົບປະຕິວັດ ແລະ ຜູ້ນຳຮຸ່ນກ່ອນ ທີ່ໄດ້ຍອມເສຍສະຫຼະຊີວິດ ແລະ ເລືອດເນື້ອ ເພື່ອ ຊາດ, ປະຊາຊົນ ແລະ ຜືນແຜ່ນດິນ ໃນປາງສົງຄາມ ເຊິ່ງຜ່ານມາຄະນະນຳ ທຫລ ກໍ່ໄດ້ເອົາໃຈໃສ່ ແລະ ເຂົ້າຮ່ວມວາງ ພວງມາລາ ແລະ ກະຕ່າດອກໄມ້ ເປັນປະຈຳໃນທຸກໆປີ.









*ພາບ-ຂ່າວ: ສົມອົກ ເຄນຄຳແພງ*